| ລາຍລະອຽດຂໍ້ມູນທີ່ໄດ້ຮັບ | | |
|---|---|---|
| ຊື່ໃບອະນຸຍາດ | ໃບຢັ້ງຢືນແບບຜັງວົງຈອນລວມ | |
| ປະເພດຂອງໃບອະນຸຍາດ | ໃບຢັ້ງຢືນ | |
| ເລກລະຫັດໃບອະນຸຍາດ | ວັນທີ | ໜ່ວຍງານຮັບຜິດຊອບ |
| MoST-IPD-21 | 27.09.2017 | ກົມຊັບສິນທາງປັນຍາ |

| ຂໍ້ມູນພື້ນຖານ | |
|---|---|
| ຮູບແບບການສົ່ງຄໍາຮ້ອງ | ຢູ່ທີ່ຫ້ອງການເຈົ້າໜ້າທີ່ |
| ປະເພດທຸລະກິດ ສະເພາະ ທີ່ຕິດພັນກັບ ໃບອະນຸຍາດ | ທຸກພາກສ່ວນ |
| ຈຸດປະສົງທີ່ຕ້ອງຂໍ ໃບອະນຸຍາດ | ຈົດທະບຽນເພື່ອໄດ້ຮັບການປົກປ້ອງສິດ ເໜືອ ແບບຜັງວົງຈອນລວມ ທີ່ຄົ້ນສ້າງຂຶ້ນ ພາຍໃຕ້ກົດໝາຍ ຂອງ ສປປ ລາວ ແລະ ພາຍໃນຂອບເຂດທົ່ວ ສປປ ລາວ |
| ຜູ້ທີ່ຕ້ອງຂໍໃບອະນຸຍາດ | ຜູ້ເປັນເຈົ້າຂອງ ແບບຜັງວົງຈອນລວມ ຊຶ່ງໝາຍເຖິງ ການຈັດວາງວົງຈອນລວມ ທີ່ສະແດງອອກໃນຮູບແບບສາມມິຕິໃດກໍຕາມ ຊຶ່ງຢ່າງໜ້ອຍ ມີສ່ວນປະກອບໜຶ່ງ ທີ່ໃຊ້ການໄດ້ ແລະ ສ່ວນເຊື່ອມຕໍ່ບາງສ່ວນ ຫລື ທັງໝົດ ຂອງວົງຈອນລວມ ຫລື ການຈັດວາງວົງຈອນລວມ ໃນຮູບແບບ ສາມມິຕິ ເຫລົ່ານັ້ນ ເຮັດຂຶ້ນມາເພື່ອວົງຈອນລວມ ທີ່ມີຈຸດປະສົງສໍາລັບການຜະລິດ ແລະ ເຈົ້າຂອງ ຕ້ອງການໄດ້ຮັບການປົກປ້ອງສິດເໜືອ ແຜນຜັງວົງຈອນລວມ ດັ່ງກ່າວ ໃນ ສປປ ລາວ |
| ມີຂໍ້ມູນໃບອະນຸຍາດ ອອນລາຍບໍ່? | ແມ່ນແລ້ວ |
| ທີ່ຢູ່ຂອງຂໍ້ມູນອອນລາຍ | www.most.gov.la |
| ມີແບບຟອມໃບຄໍາຮ້ອງ ໃບອະນຸຍາດ ຫລືບໍ່? | ແມ່ນແລ້ວ |
| ຄໍາເຫັນອື່ນ ທີ່ຕິດພັນກັບ ໃບອະນຸຍາດ | 1. ບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງ ທີ່ຢູ່ຕ່າງປະເທດ ຊຶ່ງມີຈຸດປະສົງຂໍຈົດທະບຽນຊັບສິນທາງປັນຍາ ຢູ່ ສປປ ລາວ ຕ້ອງໄດ້ມີຕົວແທນ ທີ່ຖືກຕ້ອງຕາມກົດໝາຍ ຢູ່ ສປປ ລາວ ເພື່ອດໍາເນີນທຸລະກໍາ ທີ່ກ່ຽວຂ້ອງກັບ ວຽກງານຊັບສິນທາງປັນຍາ ຢູ່ ສປປ ລາວ 2. ສໍານວນຄໍາຮ້ອງຂໍຈົດທະບຽນ ແລະ ເອກະສານຄັດຕິດອື່ນໆ ສາມາດເຮັດເປັນພາສາລາວ ຫລື ອັງກິດກໍ່ໄດ້. ຖ້າວ່າ ຄໍາຮ້ອງຂໍ ຫລື ເອກະສານ ທີ່ໄດ້ເຮັດເປັນພາສາອັງກິດ, ຕ້ອງຍື່ນສະບັບແປ ເປັນພາສາລາວ |

| ຂໍ້ມູນພື້ນຖານ | |
|---|---|
| | ໂດຍໄດ້ຮັບການຢັ້ງຢືນຄວາມຖືກຕ້ອງ ພາຍໃນ 90 ວັນຫລັງຈາກວັນໄດ້ຍື່ນຄຳຮ້ອງຂໍ |

| ຄຸນະສົມບັດ ແລະ ເອກະສານປະກອບ | | |
|---|---|---|
| **ໄລຍະເວລາໃນການພິຈາລະນາຄຳຮ້ອງ ໃນການອອກໃບອະນຸຍາດ** | 180 | |
| **ຄຸນະສົມບັດຂອງຜູ້ຂໍໃບອະນຸຍາດ** | 1. ເງື່ອນໄຂສິ່ງທີ່ຈະໄດ້ຮັບໃບຢັ້ງຢືນແບບຜັງວົງຈອນລວມ ຄື ຕ້ອງເປັນແບບຜັງຕົ້ນສະບັບ ທີ່ບໍ່ຄືຂອງໃຜ ຄື ຕ້ອງແມ່ນຜົນຂອງຄວາມພະຍາຍາມທາງປັນຍາ ຂອງຜູ້ປະດິດສ້າງເອງ ແລະ ເປັນເລື່ອງທີ່ເດັ່ນໃນວົງການນັກສ້າງແບບຜັງ ແລະ ຜູ້ຜະລິດວົງຈອນລວມ ໃນເວລາສ້າງແບບຜັງດັ່ງກ່າວ 2. ບຸກຄົນທີ່ມີສິດໄດ້ຮັບການປົກປ້ອງສິດ ມີດັ່ງນີ້: (i) ເປັນພົນລະເມືອງລາວ ຫລື ຜູ້ທີ່ມີທີ່ຢູ່ອາໄສ ຢູ່ ສປປ ລາວ ຫລື ນິຕິບຸກຄົນ ຫລື ການຈັດຕັ້ງທີ່ສ້າງຕັ້ງຂຶ້ນ ພາຍໃຕ້ກົດໝາຍຂອງ ສປປ ລາວ; (ii) ບຸກຄົນທີ່ມີສັນຊາດ ຫລື ມີທີ່ຢູ່ອາໄສຢູ່ ປະເທດໃດໜຶ່ງ ຊຶ່ງເປັນພາຄີຂອງສົນທິສັນຍາປາຣີ ຫລື ຂໍ້ຕົກລົງສາກົນອື່ນ ກ່ຽວກັບ ການປົກປ້ອງຊັບສິນອຸດສາຫະກຳ ທີ່ ສປປ ລາວ ເຂົ້າຮ່ວມເປັນພາຄີ; (iii) ບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງ ທີ່ມີສະຖານທີ່ດຳເນີນການຄ້າ ແລະ ອຸດສາຫະກຳຕົວຈິງ ແລະ ມີປະສິດທິຜົນ ຢູ່ໃນອານາເຂດຂອງປະເທດໃດໜຶ່ງ ທີ່ເປັນພາຄີຂອງ ສົນທິສັນຍາປາຣີ ຫລື ຂໍ້ຕົກລົງສາກົນອື່ນ ກ່ຽວກັບ ການປົກປ້ອງຊັບສິນອຸດສາຫະກຳ ທີ່ ສປປ ລາວ ເຂົ້າຮ່ວມເປັນພາຄີ | |
| **ມີເຫດຜົນໃດບໍ່ທີ່ເຈົ້າໜ້າທີ່ ຈະປະຕິເສດການຂໍໃບອະນຸຍາດ?** | ປະຕິເສດໃນກໍລະນີທີ່ ແຜນຜັງວົງຈອນລວມ ຫລື ຜູ້ຮ້ອງຂໍ ບໍ່ມີຄຸນະສົມບັດ ຕາມທີ່ກຳນົດໄວ້ໃນກົດໝາຍ | |

| ຂໍ້ມູນຕິດພັນກັບ ການຕໍ່ອາຍຸໃບອະນຸຍາດ | |
|---|---|
| **ໃບອະນຸຍາດມີກຳນົດອາຍຸ ຫລືບໍ່?** | **ໃບອະນຸຍາດມີອາຍຸນຳໃຊ້ ຈັກເດືອນ?** |
| ແມ່ນແລ້ວ | 144 |
| **ຂັ້ນຕອນ ແລະ ເງື່ອນໄຂ ສຳລັບການຕໍ່ອາຍຸໃບອະນຸຍາດ** | ເພື່ອຮັກສາອາຍຸການປົກປ້ອງນັ້ນ, ເຈົ້າຂອງແບບຜັງວົງຈອນລວມ ຕ້ອງຈ່າຍຄ່າທຳນຽມລ່ວງໜ້າແຕ່ລະປີ |

| ຄ່າທຳນຽມ |
|---|

| ຄ່າທໍານຽມ | | | | |
|---|---|---|---|---|
| ມີຄ່າທໍານຽມແບບຟອມຄໍາ ຮ້ອງ ຫລືບໍ່? | ຄ່າບໍລິການວິຊາການ | ຄ່າທໍານຽມ | ຄ່າແບບຟອມຄໍາຮ້ອງ | ຄ່າໃຊ້ຈ່າຍທັງໝົດ |
| ແມ່ນແລ້ວ | 0.00 | 0.00 | 300000.00 | 300000.00 |
| ຄໍາເຫັນ | ອີງຕາມ ລັດຖະດໍາລັດ ເລກທີ 03/ປທ | | | |

| ຄ່າທໍານຽມການຕໍ່ອາຍຸ | | | | |
|---|---|---|---|---|
| ມີຄ່າທໍານຽມແບບຟອມ ຄໍາຮ້ອງຂໍຕໍ່ອາຍຸ ຫລືບໍ່? | ຄ່າບໍລິການວິຊາການ | ຄ່າທໍານຽມ | ຄ່າແບບຟອມຄໍາຮ້ອງ | ຄ່າໃຊ້ຈ່າຍທັງໝົດ |
| ແມ່ນແລ້ວ | 0.00 | 1120000.00 | 0.00 | 1120000.00 |
| ຄໍາເຫັນ | ອີງຕາມ ລັດຖະດໍາລັດ ເລກທີ 03/ປທ | | | |

| ນິຕິກໍາທີ່ກ່ຽວຂ້ອງ | | | |
|---|---|---|---|
| ຊື່ນິຕິກໍາ | ເລກທີ | ວັນທີ | ຄໍາເຫັນ |
| ກົດໝາຍວ່າດ້ວຍ ຊັບສິນທາງປັນຍາ (ສະບັບປັບປຸງ) | 01/ສພຊ | 20.12.2011 | ພາກທີ III ຊັບສິນອຸດສາຫະກໍາ ໝວດທີ 1 ເງື່ອນໄຂຂອງຊັບສິນອຸດສາຫະກໍາ (ມາດຕາ 17) ໝວດທີ 3 ການປົກປ້ອງຊັບສິນອຸດສາຫະກໍາ (ມາດຕາ 26, 27, 31, 37 ຫາ 41) ໝວດທີ 5 ອາຍຸການປົກປ້ອງຊັບສິນອຸດສາຫະກໍາ (ມາດຕາ 52) |

| ເອກະສານປະກອບ |
|---|
| ຊື່ເອກະສານ |
| ໃບຢັ້ງຢືນການຊໍາລະຄ່າທໍານຽມ |
| ເອກະສານອື່ນໆທີ່ກ່ຽວຂ້ອງ |

| ເອກະສານປະກອບ |
|---|
| ຮູບແຕ້ມ |
| ບົດສັງເຂບ |
| ໜັງສືມອບສິດ |
| ໃບຄຳຮ້ອງ |

| ສະຖິຕິ (ທີ່ອອກໃໝ່ ຫລື ທີ່ຕໍ່ອາຍຸ) | | |
|---|---|---|
| ປີ | ອອກໃໝ່ | ຕໍ່ອາຍຸ |
| 2016 | | |